# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 04 ກຸມພາ 2007 ( 02- 4 -2007)

---

## ພຣະທັມຈາກພຣະເຈົ້າ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 1:1-9,14-17

**ຄວາມຈິງໃນພຣະຄັມພີ:** ພຣະເຢຊູຄຣິດ, ເປັນພຣະເຈົ້າທີ່ຕລອດໄປເປັນນິດ ແລະເປັນພຣະຜູ້ສ້າງໄດ້ກາຍມາເປັນມະນຸດ ແລະການເປັນມະນຸດຂອງພຣະອົງນັ້ນ ກໍຍັງຮັກສາຄວາມເປັນພຣະເຈົ້າຂອງພຣະອົງຢ່າງສົມບູນ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ຂຽນມາເພື່ອຊ່ອຍໃຫ້ທ່ານຮັບວ່າພຣະຄຣິດເປັນສູນກາງຂອງຄວາມເຊື່ອຂອງຄຣິສຕຽນໂດຍ...

- ຮູ້ວ່າພຣະເຢຊູນັ້ນເປັນພຣະເຈົ້າກ່ອນທີ່ພຣະອົງຈະມາຊົງສະພາບເປັນມະນຸດ ແລະພຣະອົງຊົງເປັນພຣະເຈົ້າຢ່າງເຕັມປ່ຽມ ໃນຣະຫວ່າງສະເດັດມາເກີດເປັນມະນຸດແລະ...
- ຮູ້ວ່າພຣະເຢຊູນັ້ນເປັນພຣະເຈົ້າແທ້ຈິງທີ່ມາໃນສະພາບຂອງເນື້ອໜັງ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໜາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້.
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## ບົດນຳ:

1. ແນະນຳຊື່ ແລະຫົວຂໍ້ບົດຮຽນທີ່ຈະຮຽນໃນມື້ນີ້.
2. **ຄຳຖາມ:** ແມ່ນຫຍັງທີ່ເຮັດໃຫ້ຊາວຄຣິສຕຽນມີລັກສະນະພິເສດຖ້າມກາງສາສນາອື່ນໆໃນໂລກ?
3. **ຄຳຖາມ:** 1) ເປັນຫຍັງພຣະເຢຊູຈຶ່ງເປັນຜູ້ມີລັກສະນະພິເສດສຸດ? 2) ເປັນຫຍັງທ່ານຈຶ່ງຮູ້ສຶກວ່າພຣະເຢຊູເປັນຜູ້ມີລັກສະນະພິເສດ? ( ບອກນັກຮຽນວ່າ: ບົດຮຽນນີ້ຈະຊ່ອຍເຂົາເຈົ້າໃຫ້ໄດ້ຄຳຕອບຕໍ່ຄຳຖາມນີ້) 3) ມີທາງໃດທີ່ຊີ້ບອກວ່າ ພຣະເຢຊູເປັນຜູ້ມີລັກສະນະພິເສດ? 4) ແມ່ນລັກສະນະອັນໃດຂອງພຣະອົງທີ່ມີຄວາມໝາຍສຳຄັນຕໍ່ທ່ານ? 5) ລັກສະນະພິເສດຂອງພຣະອົງສະທ້ອນເຖິງຊີວິດຂອງທ່ານຢ່າງໃດ?

## 1. <u>ພຣະເຢຊູຊົງເປັນພຣະເຈົ້າ:</u> ( ໂຢຮັນ 1:1)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 1:1

2)**ສົນທະນາ:** ຄຳວ່າ " **ພຣະເຢຊູຊົງເປັນພຣະເຈົ້າ** " ເຣື່ອງນີ້ຍັງຖືກຖຽງຢູ່ໃນທຸກມື້ນີ້,

3) **ຖາມ:** ທ່ານຈະໃຫ້ຄຳຕອບແນວໃດຕໍ່ຜູ້ທີ່ວ່າ ພຣະເຢຊູເປັນພຽງຜູ້ສອນທີ່ສລາດ ຫລືພຽງແຕ່ເປັນຜູ້ເຜີຍແຜ່ພຣະທັມທີ່ສລາດຜູ້ນຶ່ງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນ:** ໂຢຮັນ 1:1

1. ຫາກແມ່ນທ່ານມີຊີວິດຢູ່ໃນເວລາຂຽນພຣະທັມຂໍ້ນີ້ຈະໄປຂັດກັບແນວຄິດຂອງຄົນໃນສມັຍນັ້ນຢູ່ບໍ?
2. ຄົນໃນວັທນະທັມຂອງເຮົາມີຄວາມສົງສັຍກ່ຽວກັບເຫດຜົນຂອງໂຢຮັນທີ່ຂຽນໃນຂໍ້ທີນຶ່ງນີ້ຢ່າງໃດ?
3. ທ່ານສາມາດອະທິບາຍໃຫ້ລູກ ຫລານ ແລະຄົນທີ່ເຮັດການກັບທ່ານວ່າ ພຣະເຢຊູເປັນພຣະເຈົ້າ, ບໍ່ແມ່ນເປັນພຽງແຕ່ຄຣູສອນ ຫລືຜູ້ປະກາດເຜີຍແຜ່ພຣະທັມທີ່ສລາດເທົ່ານັ້ນໄດ້ຢ່າງໃດ?
4. ຖ້າຫາກທ່ານເປັນຜູ້ເຜີຍແຜ່ຂ່າວປະເສີດຢູ່ໃນປະເທດທີ່ເຕັມໄປດ້ວຍມຸສລິມ: ທ່ານເລີ້ມຕົ້ນທົດລອງອະທິບາຍພຣະຄຳຂໍ້ນີ້ໃຫ້ຜູ້ໃດຜູ້ນຶ່ງຟັງແນວໃດ?

## 2. <u>ພຣະເຢຊູຊົງເປັນພຣະຜູ້ສ້າງ:</u> ( ໂຢຮັນ 1:2-3)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 1:2-3

2) **ສົນທະນາ:** ເຣື່ອງພາຣະກິຈການຊົງສ້າງຂອງພຣະເຢຊູຄຣິດທີ່ມີຣິດອຳນາດເໜືອກ່ວາສິ່ງທັງປວງ

3) ທ່ານໂຢຮັນໄດ້ປ່ຽນຄຳກິຣິຍາໃນຂໍ້ 3 ເພື່ອໃຫ້ຜູ້ທີ່ອ່ານເຫັນຄວາມແຕກຕ່າງທີ່ວ່າຫຍັງເປັນຫຍັງເປັນມາຕລອດ, ໃຫ້ຫຍັງເຂົ້າມາເປັນປະຈຸບັນ. ( ເປັນເຣື່ອງຂອງໄວຍະກອນ )

3) ເປັນຫຍັງທ່ານໂຢຮັນຈຶ່ງເຮັດແບບນີ້?

4) ທ່ານໂຢຮັນໄດ້ບົ່ງບອກເຖິງຈຸດອັນໃດ? ( ຄຳຖາມຂອງຂໍ້ 3-4 ນີ້ ຕ້ອງເບິ່ງຢູ່ໃນພາກບັລຍາຍແຜນການຜູ້ນຳໜ້າ 114)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ: ໂຢຮັນ 1:2-3**

1. ພຣະອົງຊົງສ້າງໂລກໂດຍບໍ່ຕ້ອງການສິ່ງປະກອບແທ້ຈິງຫລືບໍ່?
2. ຄົນທັງຫລາຍຍັງຄິດເຣື່ອງພຣະເຢຊູຊົງເປັນຜູ້ສ້າງຢູ່ບໍ່?
3. ຖ້າຫາກທ່ານຢູ່ກັບກຸ່ມຄົນທຳງານນຳກັນ ຫລືເພື່ອນບ້ານທີ່ເຂົາເວົ້າວ່າພຣະເຢຊູເປັນຜູ້ສ້າງເປັນເຣື່ອງເຫລວໄຫລ ທ່ານຈະຮັບຜິດຊອບໃນເຣື່ອງນີ້ຢ່າງໃ?
4. ຖ້າຫາກທ່ານມີໝູ່ເພື່ອນທີ່ກຳລັງຊອກຮູ້ຄວາມຈິງກ່ຽວກັບເຣື່ອງພຣະເຢຊູຄຣິດເປັນຜູ້ສ້າງ; ທ່ານຈະເຮັດແນວໃດ?
5. ທ່ານຈະອະທິບາຍໃຫ້ເຂົາເຂົ້າໃຈແຈ້ງໄດ້ດ້ວຍວິທີໃດ?

## 3. <u>ພຣະເຢຊູຊົງເປັນຄວາມສວ່າງອັນແທ້ຈິງ:</u> ( ໂຢຮັນ 1:4-9)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຢຮັນ 1:4-9

2) ຄວາມຮູ້ສຶກກ່ຽວກັບແສງສວ່າງ ( ຕົວຢ່າງ: ຄວາມປອດພັຍ, ຄວາມເຊື່ອໝັ້ນ ) ຂຽນໃສ່ກະດານ ແລະຖາມນັກຮຽນເຖິງຄວາມຮູ້ສຶກໃນການຢູ່ໃນແສງສວ່າງ ກັບຢູ່ໃນຄວາມມືດມີຄວາມໝັ້ນໃຈອັນໃດ, ຖ້າເຂົາເຈົ້າຮູ້ວ່າພຣະເຢຊູຄຣິດເປັນຜູ້ຊ່ອຍໃຫ້ພົ້ນຈາກຄວາມຜິດຄວາມບາບແລ້ວເຂົາເຈົ້າກໍຈະເຫັນ ແລະຮູ້ວ່າພຣະອົງເປັນແສງສວ່າງອັນແທ້ຈິງ.

3) ໃນກາງຄືນທີ່ມີຄວາມມືດນັ້ນຖ້າເອົາໄຟສາຍສ່ອງເບິ່ງທາງແລ້ວເຮົາຈະເຫັນທາງທີ່ເຮົາຈະຍ່າງໄປ, ພຣະເຢຊູຄຣິດກໍເປັນແສງສວ່າງນຳທາງເດີນຂອງຊີວິດເຮົາ ເພື່ອບໍ່ໃຫ້ເຮົາຊຸນສະດຸດ.

4) ໃນຂໍ້ທີ 5 ທ່ານໂຢຮັນຊີ້ໃຫ້ເຮົາເຫັນວ່າແສງສວ່າງຂອງໂລກນັ້ນແມ່ນພຣະເຢຊູຄຣິດ. ຖາມ: (1) ໃນສມັຍນີ້ພຣະ

ເຢຊູໄດ້ສ່ອງແສງສວ່າງຢູ່ໃນໂລກນີ້ຢ່າງໃດ? (2) ທ່ານໄດ້ນຳແສງສວ່າງອັນແທ້ຈິງຂອງພຣະເຢຊູເຍືອງໄປຫາຄົນອື່ນແລ້ວຫລືຍັງ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຢຮັນ 1:4-9

1. ບາງຄັ້ງເຮົາໄດ້ຍິນຄົນເວົ້າວ່າ: ແສງສວ່າງຂອງພຣະເຢຊູໄດ້ສ່ອງເຂົ້າມາຫາເຂົາເຈົ້າ. ອັນນີ້ໝາຍຄວາມວ່າຢ່າງໃດ?
2. ພຣະເຢຊູໄດ້ສ່ອງແສງສວ່າງເຂົ້າມາຫາທ່ານ ແລະຄົນອື່ນໃນທີ່ທຳງານ, ທີ່ບ້ານ ແລະເພື່ອນບ້ານຂອງທ່ານດ້ວຍວິທີໃດແດ່?
3. ເວລາໃດທີ່ພຣະເຢຊູປ້ອງກັນທ່ານຈາກການຈູນສະດຸດ?
4. ທ່ານຈະນຳແສງສວ່າງນີ້ໄປຫາໃຜ?
5. ທ່ານຕ້ອງການອະທິຖານໃຫ້ໃຜຮັບເອົາແສງສວ່າງອັນແທ້ຈິງຂອງພຣະເຢຊູຄຣິດ?

4. <u>**ພຣະເຢຊູເຕັມໄປດ້ວຍພຣະຄຸນ ແລະຄວາມຈິງ:**</u> ໂຢຮັນ 1:14-17

1) ຂໍໃຫ້ນັກຮຽນຄົນນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 1:14-17

2) ແນະນຳ: ທ່ານສາມາດອ່ານຄຳອະທິບາຍຂອງຄຳວ່າ " ພຣະຄຸນ ແລະຄວາມຈິງໃນເວັບຊາຍ www.lifeway.com and click on " Online Bible" "Dictionaries"

3) **ສົນທະນາ:** ທຸກມື້ນີ້ມີຄົນຫລາຍປານໃດທີ່ປະສົບກັບຄວາມຫວ້າງເປົ່າ ແລະເຂົາໄດ້ພະຍາຍາມຊອກຫາສິ່ງຂອງທີ່ເປັນຝ່າຍໂລກມາເຕີມຊ່ອງຫວ້າງຂອງເຂົາໃຫ້ເຕັມ.

4) **ຄຳຖາມ:** (1) ກ່ອນທ່ານມາຮູ້ຈັກພຣະເຢຊູ ທ່ານໄດ້ເອົາຫຍັງມາເຕີມໃນຊ່ອງຫວ້າງຂອງທ່ານ? (2) ຫລັງຈາກທ່ານມາຮູ້ຈັກພຣະເຢຊູຄຣິດແລ້ວການດຳເນີນຊີວິດຂອງທ່ານໄດ້ມີຄວາມແຕກຕ່າງກັນກັບຕອນບໍ່ຮູ້ຈັກພຣະເຢຊູຄຣິດຢ່າງໃດ? (3) ຄົນສ່ວນຫລາຍໄດ້ແນະນຳຊັກຈູງທ່ານໃຫ້ເຊື່ອໄວ້ວາງໃຈໃນທາງອື່ນນອກຈາກພຣະເຢຊູຄຣິດ? (4) ພຣະເຢຊູຄຣິດເຕັມໄປດ້ວຍຄວາມຈິງນຳພາພວກເຮົາໃຫ້ເຊື່ອແລະໄວ້ວາງໃຈໃນພຣະອົງຢ່າງໃດ?

5) ໃນພຣະທັມ ໂຢຮັນ 1:1 ໄດ້ສອນວ່າ ພຣະເຢຊູຊົງເປັນພຣະເຈົ້າ, ໂຢຮັນ 1:14 ສອນວ່າ ພຣະອົງຊົງບັງເກີດເປັນມະນຸດ. **ຖາມວ່າ** ແມ່ນຫຍັງທີ່ເປັນສິ່ງທີ່ກ່ຽວຂ້ອງພົວພັນກັບພວກເຮົາ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຢຮັນ 1:14-17

1. ມີທາງໃດແດ່ທີ່ທ່ານສາມາດສະແດງພຣະຄຸນ ແລະຄວາມຈິງນີ້ໃຫ້ຄົນອື່ນເຫັນ?
2. ສັນຍາລັກພິເສດຂອງພຣະເຢຊູມີຄວາມສຳຄັນຕໍ່ຊີວິດຂອງທ່ານແນວໃດ?
3. ໃນຂໍ້ທີ 14 ທ່ານໂຢຮັນເອີ້ນພຣະເຢຊູວ່າ " ພຣະບຸດອົງດຽວຂອງພຣະບິດາ " ໃນປະໂຍກນີ້ໄດ້ສະແດງເຖິງລັກສະນະພິເສດຂອງພຣະອົງຢ່າງໃດ?
4. ແຕ່ກ່ອນທ່ານໄດ້ພະຍາຍາມເຕີມຊ່ອງຫວ້າງເປົ່າຂອງທ່ານດ້ວຍການມາຮູ້ຈັກພຣະເຢຊູວິທີໃດ?
5. ທ່ານໄດ້ເຕີມຊ່ອງຫວ້າງເປົ່າດ້ວຍພຣະເຢຊູແລ້ວຊີວິດຂອງທ່ານມີຄວາມແຕກຕ່າງຢ່າງໃດແດ່?

<u>**ສລູບ:**</u>

1. ແນະນຳໃຫ້ນັກຮຽນສົນໃຈຈົດຈໍ່ໃນ 4 ຫົວຂໍ້ໃຫຍ່ໃນບົດຮຽນນີ້ ໃຫ້ສຶກສາເພື່ອໃຫ້ເຂົ້າໃຈແຈ້ງ.
2. ໃຫ້ຍຶດຖືເອົາພຣະເຢຊູຄຣິດໄວ້ເປັນສູນກາງຂອງຄວາມເຊື່ອໃນການເປັນຄຣິສຕຽນ.
3. ອະທິຖານປິດຫ້ອງຮຽນ: ທູນຂໍຕໍ່ພຣະເຈົ້າໃຫ້ເສີມຄວາມເຂົ້າໃຈແລະຄວາມເຊື່ອ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ: www.lsbf.org ແປໂດຍ J.H.